ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ

2696-

ເລກທີ .................../ຫກ.

ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ 2023

# ໜັງສືສະເໜີ

**ຮຽນ:** ທ່ານ ຫົວໜ້າ ຫ້ອງການບໍລິການ ການລົງທຶນປະຕູດຽວ, ກົມສົ່ງເສີມການລົງທຶນ, ກະຊວງ ແຜນການ ແລະ ການລົງທຶນ.

**ເລື່ອງ:** ສືບຕໍ່ ການໂຈະຮັບເອກະສານການຂໍອະນຸຍາດດຳເນີນທຸລະກິດການບໍລິການຈັດຫາງານ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 0888/ຣສສ, ລົງວັນທີ 18 ມີນາ 2022;
- ອີງຕາມ ແຈ້ງການຂອງຫ້ອງການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1481/ຫສນຍ, ລົງວັນທີ 14 ຕຸລາ 2022 ຕອນທ້າຍຂໍ້ທີ 1 ທີ່ຊີ້ນຳວ່າ ໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະເມີນ ຄືນບັນດາບໍລິສັດຈັດຫາງານ;
- ອີງຕາມ ທິດຊີ້ນຳຂອງຄະນະນຳ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການປະເມີນ ການເຄື່ອນໄຫວ ຂອງບັນດາ ວິສາຫະກິດ ບໍລິການຈັດຫາງານ.

ຫ້ອງການ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂໍຖືເປັນກຽດສະເໜີມາຍັງທ່ານຊາບວ່າ: ເພື່ອເຮັດໃຫ້ການເຄື່ອນໄຫວບໍລິການຈັດຫາງານ ຂອງບັນດາວິສາຫະກິດບໍລິການຈັດຫາງານ ມີປະສິດທິພາບສູງຂຶ້ນ ບົນພື້ນຖານຄວາມສອດຄ່ອງທາງດ້ານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ຫຼັກການຂອງການບໍລິການຈັດຫາງານ ໂດຍອີງໃສ່ຈຳນວນວິສາຫະກິດບໍລິການຈັດຫາງານທີ່ມີຢູ່ປະຈຸບັນ ທຽບໃສ່ ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງປະເທດ ແລ້ວ ເຫັນວ່າ ມີຄວາມເໝາະສົມກັບຈຳນວນວິສາຫະກິດທີ່ມີ. ຖ້າມີການອະນຸຍາດເພີ່ມ ຈະເກີດມີການແຂ່ງຂັນທີ່ສູງຂຶ້ນ ຊຶ່ງຈະສົ່ງຜົນກະທົບທາງລົບຕໍ່ວິສາຫະກິດເອງ, ຜູ້ອອກແຮງງານ ແລະ ການບໍລິການວຽກງານແຮງງານ.

ກະຊວງແຮງງານ ແລະ ສະຫວັດດີການຄົມ ຈະສືບຕໍ່ປະເມີນບັນດາວິສາຫະກິດບໍລິການຈັດຫາງານ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວການບໍລິການຈັດຫາງານ ເພື່ອຄັດເລືອກເອົາບໍລິສັດຈັດຫາງານທີ່ມີຢູ່ ແລະ ມີຄຸນນະພາບ, ຄວາມພ້ອມ ທີ່ຈະໃຫ້ສືບຕໍ່ເຄື່ອນໄຫວ ແລະ ຫຼຸດຜ່ອນ ຫຼື ໂຈະການເຄື່ອນໄຫວ ຂອງວິສາຫະກິດທີ່ເຫັນວ່າ ບໍ່ມີເງື່ອນໄຂ ແລະ ຄວາມພ້ອມ.

ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຖະໜົນ ໂນນສະອາດ, ເມືອງ ໄຊທານີ, ໂທ: 021 213011)

ເພາະສະນັ້ນ, ຈຶ່ງເຫັນວ່າ ຈະໄດ້ໂຈະການພິຈາລະນາອະນຸຍາດການດຳເນີນທຸລະກິດບໍລິການຈັດຫາງານໄວ້ກ່ອນ ຈົນກວ່າຈະມີການປ່ຽນແປງ( ມີຄວາມຈຳເປັນ ຫຼື ຄວາມຕ້ອງການຈຳນວນຂອງຜູ້ບໍລິການຕື່ມ) ໃນຕໍ່ໜ້າ.

ສຳລັບການສະເໜີຂໍອະນຸຍາດການເຄື່ອນໄຫວວິສາຫະກິດບໍລິການຈັດຫາງານ ກ່ອນວັນທີ 02 ພຶດສະພາ 2023 ແມ່ນ ຢູ່ໃນຂັ້ນຕອນການຄົ້ນຄວ້າ ແລະ ປະກອບເອກະສານ ໃຫ້ສອດຄ່ອງ, ຄົບຖ້ວນ ແລະ ຖືກຕ້ອງ ຕາມລະບຽບການທີ່ໄດ້ກຳນົດ ລວມທັງ ລໍຖ້າການປະເມີນວິສາຫະກິດບໍລິການຈັດຫາງານໃຫ້ສຳເລັດ ຈຶ່ງຈະພິຈາລະນາຕາມເງື່ອນໄຂ ແລະ ລະບຽບການ ຈາກນັ້ນ, ຈະແຈ້ງເປັນທາງການມາຍັງ ຫ້ອງການບໍລິການ ການລົງທຶນປະຕູດຽວ, ກົມສົ່ງເສີມການລົງທຶນ ເພື່ອຮັບຊາບ ແລະ ຄົ້ນຄ້ວາ ຕາມກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອຊາບ ແລະ ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການຮ່ວມມື ຈາກທ່ານເປັນຢ່າງດີ.

**ຫົວໜ້າຫ້ອງການ**

ບຸນຍອດ ຈັນທະວອນ